
ຄວາມຮັກຂັບເຄື່ອນ
ດ້ວຍພັນທະກິດ
ບົດຮຽນທີ 9 ສໍາລັບສະບາໂຕທີ 29, 2026


“ເຮົາໄດ້ຂຽນມາເຖິງພວກເຈົ້າ
ດ້ວຍຄວາມລຳບາກຍິ່ງ ແລະ
ຄວາມເສົ້າໂສກຢ່າງໜັກ ແລະ
ດ້ວຍນ້ຳຕາຫລັ່ງໄຫລ,
ຈຸດປະສົງຂອງເຮົາບໍ່ແມ່ນເພື່ອ
ຈະເຮັດໃຫ້ພວກເຈົ້າເສົ້າໂສກ,
ແຕ່ເພື່ອເຮັດໃຫ້ພວກເຈົ້າຮູ້ຈັກ
ວ່າ ເຮົາຮັກພວກເຈົ້າທຸກຄົນ
ຫລາຍເທົ່າໃດ.”
2 ໂກຣິນໂທ 2:4



ໃນຂະນະທີ່ພວກເຮົາເຈາະເລິກເຖິງຈົດໝາຍສະບັບທີສອງ ທີ່ ອຈ ໂປໂລ ສົ່ງໃຫ້ຊາວເມືອງໂກຣິນໂທ, ພວກເຮົາສັງເກດໄດ້ວ່າ ຈົດໝາຍສະບັບນີ້ແມ່ນມີຄວາມຫ່ວງໄຍໃນສຸກສໍາລັບຊາວເມືອງນັ້ນ.

ເຖິງວ່າມັນຈະບໍ່ແມ່ນເລື່ອງງ່າຍເລີຍສໍາລັບການຕິດຕາມພຣະເຈົ້າ ໃນໂລກທີ່ເຕັມໄປດ້ວຍຄວາມບາບນີ້ກໍ່ຕາມ, ໃນສະຕະວັດທໍາອິດ ການປະກາດຕົນເອງວ່າເປັນຄຣິສຕຽນ ອາດຈະຕ້ອງຜະເຊີນກັບຄວາມຫຍຸ້ງຍາກຫລາຍ.

ອຈ ໂປໂລ ໄດ້ກຽມຄຣິສຕະຈັກໃຫ້ຮັບມືກັບສິ່ງເຫລົ່ານັ້ນ, ບໍ່ວ່າຈະເປັນທາງດ້ານຈິດວິນຍານ ຫລື ທາງດ້ານຮ່າງກາຍກໍ່ຕາມ, ແລະ ສອນພວກເຂົາໃຫ້ມີຄວາມຮັກ, ມີຄວາມສາມັກຄີ ໂດຍປາສະຈາກການເຫັນແກ່ໂຕ. ຈາກຄໍາແນະນໍາຂອງເພິ່ນພວກເຮົາສາມາດຮຽນຮູ້ໄດ້ວ່າ "ກິ່ນຫອມຫວານແຫ່ງຊີວິດທີ່ນໍາໄປສູ່ຊີວິດ" (2 ກຣທ2:16).





- ພຣະເຈົ້າຊົງປອບໂຍນຜູ້ທີ່ຖືກຂົ່ມເຫັງ
- ຄວາມບໍຣິສຸດ ແລະ ຄວາມຕັ້ງໃຈໃນການຮັບໃຊ້
- ເພື່ອທີ່ຈະປະພຶດຕົນເອງຢ່າງສະຫລາດ
- ການໃຫ້ອະໄພ ແລະ ການຄືນດີກັນ
- ກິ່ນຫອມຂອງພຣະຄຣິດ

# ພຣະເຈົ້າປອບໂຍນຜູ້ທີ່ຖືກຂົ່ມເຫັງ

"ເຮົາໄດ້ຂຽນມາເຖິງພວກເຈົ້າ ດ້ວຍຄວາມລຳບາກຍິ່ງ ແລະຄວາມເສົ້າໂສກຢ່າງໜັກ ແລະດ້ວຍນ້ຳຕາຫລັ່ງໄຫລ, ຈຸດປະສົງຂອງເຮົາບໍ່ແມ່ນເພື່ອຈະເຮັດໃຫ້ພວກເຈົ້າເສົ້າໂສກ, ແຕ່ເພື່ອເຮັດໃຫ້ພວກເຈົ້າຮູ້ຈັກວ່າ ເຮົາຮັກພວກເຈົ້າທຸກຄົນຫລາຍເທົ່າໃດ." 2 ໂກຣິນໂທ 2:4

2 ໂກຣິນໂທ ແມ່ນຈົດໝາຍສະບັບທີສອງທີ່ ອຈ ໂປໂລຂຽນກ່ຽວກັບການປອບໂຍນຢ່າງກວ້າງຂວາງ. ຄຣິດຕະຈັກໄດ້ກຳລັງຜະເຊີນກັບຊ່ວງເວລາທຸກຍາກລຳບາກ, ແລະ ຈົດໝາຍສະບັບກ່ອນຂອງ ອຈ ໂປໂລ ໄດ້ເຮັດໃຫ້ພວກເຂົາຮູສຶກເສົ້າໂສກເສຍໃຈໃນຄວາມບາບ

ແຕ່ວ່າຄວາມໂສກເສົ້ານັ້ນ "ຄວາມໂສກເສົ້າທີ່ມາຈາກພຣະເຈົ້າ" ເຊິ່ງນຳໄປສູ່ການກັບໃຈ (2 ກຣທ 7:10). ເພາະສະນັ້ນ ອຈ ໂປໂລ ບໍ່ຢາກໃຫ້ຄວາມໂສກເສົ້ານັ້ນນຳໄປສູ່ຄວາມເສຍໃຈ, ແຕ່ວ່າມັນຄວນເປັນການປອບໂຍນ



ອຈ ໂປໂລ ໄດ້ຜະເຊີນດ້ວຍຕົນເອງເຖິງຊ່ວງເວລາທຸກຍາກລຳບາກເຖິງຄວາມສ່ຽງ ແລະ ເພິ່ນກໍ່ທໍ້ແທ້ (2 ກຣທ 1:8-10). ແຕ່ພຣະອົງຊົງປອບໂຍນເພິ່ນ, ແລະ ຕອນນີ້ເພິ່ນກໍ່ໄດ້ສົ່ງຕໍ່ການປອບໂຍນນັ້ນໄປທີ່ຄຣິດຕະຈັກ (2 ກຣທ 1:6).

## ການປອບໂຍນຂອງພຣະເຈົ້າ

- ເຮັດໃຫ້ພວກເຮົາບໍ່ຢ້ານກົວ
- ຊົງເຕືອນພວກເຮົາໃຫ້ລະນຶກເຖິງຊ່ວງເວລາທີ່ພຣະອົງໄດ້ຊ່ວຍ
- ຊ່ວຍໃຫ້ພວກເຮົາອົດທົນຕໍ່ຊ່ວງເວລາທີ່ລຳບາກ
- ຊ່ວຍໃຫ້ຈິດວິນຍານຂອງພວກເຮົາກາຍເປັນຜູ້ໃຫຍ່
- ກະຕຸ້ນໃຫ້ພວກເຮົາໜູນໃຈ ແລະ ອະທິຖານເພື່ອຄົນອື່ນ
- ປອບໂຍນຄົນອື່ນດັ່ງທີ່ພຣະອົງປອບໂຍນພວກເຮົາ

# ຄວາມບໍຣິສຸດ ແລະ ຄວາມຕັ້ງໃຈໃນການຮັບໃຊ້

“ນີ້ແຫຼະ ແມ່ນສິ່ງທີ່ພວກເຮົາເອກອ້າງໄດ້ຄື: ໃຈສຳນຶກຜິດແລະຊອບຂອງພວກເຮົາກໍເປັນພະຍານວ່າ, ການດຳເນີນຊີວິດຂອງພວກເຮົາຢູ່ໃນໂລກນີ້ ດ້ວຍຄວາມບໍຣິສຸດໃຈແລະດ້ວຍຄວາມຈິງໃຈທີ່ມາຈາກພຣະເຈົ້າ ບໍ່ແມ່ນໂດຍປັນຍາຂອງມະນຸດ ແຕ່ເປັນມາໂດຍພຣະຄຸນຂອງພຣະເຈົ້າ.” 2 ໂກຣິນໂທ 1:12

ບາງຄົນດູຖູກ ອຈ ໂປໂລ, ກ່າວຫາວ່າເພິ່ນອ່ອນແອ ແລະ ບໍ່ເດັດຂາດ (2 ກຣທ 10:10). ດ້ວຍເຫດນີ້, ເພື່ອໃຫ້ຄຳແນະນຳຂອງເພິ່ນຖືກຍອມຮັບຈຶ່ງຕ້ອງມີການປົກປ້ອງຂໍ້ກ່າວຫານັ້ນເຊັ່ນກັນ



ໃນຖານະມະນຸດຄົນໜຶ່ງ, ເພິ່ນພິຈາລະນາໂຕເພິ່ນເອງວ່າບໍ່ມີຄວາມສຳຄັນ (ອຟຊ 3:8). ແຕ່ໂດຍພຣະຄຸນຂອງພຣະເຈົ້າ, ເພິ່ນສາມາດກ່າວວ່າເພິ່ນມີຈິດສຳນຶກທີ່ບໍຣິສຸດ (2 ກຣທ 1:12).



ເພິ່ນ ແລະ ຜູ້ຮ່ວມງານຂອງເພິ່ນສາມາດກ່າວດ້ວຍຄວາມໝັ້ນໃຈວ່າການປະພຶດຂອງພວກເພິ່ນນັ້ນແມ່ນບໍຣິສຸດໃຈ ແລະ ຕັ້ງໃຈ ບໍ່ວ່າຈະຢູ່ໃນຄຣິດຕະຈັກ ຫລື ຢູ່ນອກຄຣິດຕະຈັກ



ດ້ວຍເຫດນີ້ ຈົດໝາຍຂອງເພິ່ນຈຶ່ງມີເຈດຕະນາທີ່ຈະບໍ່ປົກປິດຫຍັງ, ເພິ່ນຫວັງວ່າຈົດໝາຍນີ້ຈະຖືກເປີດອ່ານ ແລະ ເຂົ້າໃຈໃນຄຳວ່າບໍຣິສຸດ ແລະ ຄວາມຕັ້ງໃຈ, ເຊິ່ງຊຽນຂຶ້ນດ້ວຍຄວາມຮັກຕໍ່ພວກເຂົາ ແລະ ມຸ່ງຫວັງໄປທີ່ໃຫ້ເປັນຜົນດີແກ່ພວກເຂົາເທົ່ານັ້ນ (2 ກຣທ 1:13-14).

# ເພື່ອທີ່ຈະປະພຶດຢ່າງສະຫລາດ

"ແຕ່ເຮົາຂໍໃຫ້ພຣະເຈົ້າເປັນພະຍານແກ່ເຮົາ ທີ່ເຮົາຍັງບໍ່ໄດ້ໄປເມືອງໂກຣິນໂທ ນັ້ນ ກໍເພື່ອງົດໂທດຂອງພວກເຈົ້າໄວ້ກ່ອນ." 2 ໂກຣິນໂທ 1:23



ໃນຈົດໝາຍສະບັບທຳອິດຂອງເພິ່ນ, ອຈ ໂປໂລ ໄດ້ແຈ້ງພວກເຂົາເຖິງ ແຜນການເດີນທາງທີ່ຈະໄປຢ້ຽມຊາວໂກຣິນໂທ (1 ກຣທ. 16:5-11):

Ephesus → Macedonia → Corinth → Judea

ໃນຈົດໝາຍສະບັບຕໍ່ຕາມ (lost, 2 Cor. 7:8) ເພິ່ນໄດ້ແຈ້ງພວກເຂົາວ່າ ຈະໄປຢ້ຽມຢາມເຖິງສອງຄັ້ງ (2 ກຣທ 1:15-16):

Ephesus → Corinth → Macedonia → Corinth → Judea

ຢ່າງໃດກໍ່ຕາມ, ລາວໄດ້ປ່ຽນແຜນທີ່ຈະຕັດສິນບໍ່ໄປຢ້ຽມຢາມພວກເຂົາໃນ ຄັ້ງທຳອິດ (2 ກຣທ 1:23). ການປ່ຽນແປງນີ້ເຮັດໃຫ້ຄົນວິພາກວິຈານເພິ່ນ ວ່າເປັນຄົນບໍ່ແນ່ນອນ. ເປັນຫຍັງເພິ່ນຈຶ່ງປ່ຽນຄວາມຄິດຂອງເພິ່ນ?



ເນື່ອງຈາກບັນຫາທີ່ກຳລັງເກີດຂຶ້ນໃນເມືອງນັ້ນ ສະນັ້ນການໄປຢ້ຽມຢາມພວກເຂົາ ນັ້ນ ເບິ່ງຄືຈຶ່ງເປັນສິ່ງທີ່ຈຳເປັນ. ແຕ່ການຕໍ່ຕ້ານທີ່ເພິ່ນຈະຜະເຊີນນັ້ນແມ່ນການ ຜະເຊີນໜ້າ ເຊິ່ງເພິ່ນຈຳເປັນຕ້ອງຫລີກລ່ຽງ ເພາະຄວາມຮັກອັນຍິ່ງໃຫຍ່ຂອງ ເພິ່ນ (2 ກຣທ 2:1-4).

# ການໃຫ້ອະໄພ ແລະ ການຄືນດີກັນ

“ເມື່ອພວກເຈົ້າຍົກໂທດໃຫ້ຜູ້ໃດ ເຮົາກໍຈະຍົກໂທດໃຫ້ຜູ້ນັ້ນເໝືອນກັນ. ດ້ວຍວ່າ, ເມື່ອເຮົາຍົກໂທດໃຫ້ຜູ້ໃດແລ້ວ ເຮົາກໍຍົກໂທດໃຫ້ຜູ້ນັ້ນ. ເພາະເຫັນແກ່ເຈົ້າທັງຫລາຍຕໍ່ໜ້າພຣະຄຣິດ” 2 ໂກຣິນໂທ 2:10

ໃນຂະນະທີ່ ອາຈານໂປໂລກຳລັງເດີນທາງໄປທີ່ເມືອງໂທອາດ, ທ່ານ ຕີໂຕ ໄດ້ໄປເມືອງໂກຣິນໂທ. ຈາກເມືອງ ໂທອາດ, ອຈ ໂປໂລ ໄດ້ໄປເມືອງມາເກໂດເນຍ. ແຕ່ເພິ່ນມີຄວາມຍຸ່ງດຫລາຍ ເພາະວ່າ ທ່ານ ຕີໂຕ ບໍ່ໄດ້ພົບເພິ່ນທີ່ເມືອງໂທດອາດ ເພື່ອທີ່ຈະບອກເລົ່າຂ່າວຂອງພີ່ນ້ອງໃນຄຣິດຕະຈັກໂກຣິນໂທ (2 ກຣທ 2:12-13).

ຕໍ່ມາບໍ່ດົນ, ທ່ານ ຕີໂຕ ໄດ້ພົບກັບອາຈານໂປໂລ ຢູ່ທີ່ເມືອງ ມາເກໂດເນຍ. ເພິ່ນບອກ ອຈ ໂປໂລ ວ່າພີ່ນ້ອງຊາວໂກຣິນໂທນັ້ນໄດ້ຕອບສະໜອງຕໍ່ຄຳຕັກເຕືອນຂອງ ອຈ ໂປໂລເປັນຢ່າງດີ (2 ກຣທ 7:5-9, 13-16).







ໜຶ່ງໃນບັນຫາທີ່ພວກເຂົາຕ້ອງແກ້ໄຂແມ່ນເລື່ອງຂອງລະບຽບວິໃນຂອງຄຣິດຕະຈັກ, ຜູ້ກະທຳຜິດໄດ້ຮັບການຕັກເຕືອນ ແລະ ຍອມຮັບຄຳຕັກເຕືອນແລ້ວ. ເນື່ອງຈາກພວກເຂົາໄດ້ຟັງຄຳຕັກເຕືອນ ອຈ ໂປໂລຈຶ່ງຂໍໃຫ້ພວກເຂົາເຮັດຂັ້ນຕອນຕໍ່ໄປ ນັ້ນກໍ່ ຄື ການໃຫ້ອະໄພເຊິ່ງກັນແລະກັນ ແລະ ການຟື້ນຟູຈິດວິນຍານ (2 ກຣທ 2:5-11).

# ກິ່ນຫອມຂອງພຣະຄຣິດ

“ດ້ວຍວ່າ, ພວກເຮົາເປັນດັ່ງກິ່ນຫອມຫວານທີ່ພຣະຄຣິດຖວາຍແກ່ພຣະເຈົ້າ ໃນທ່າມກາງພວກທີ່ຖືກຊົງໂຜດຊ່ວຍໃຫ້ພົ້ນ ແລະໃນທ່າມກາງພວກທີ່ກຳລັງຈິບຫາຍໄປ.”
2 ໂກຣິນໂທ 2:15



ອຈ ໂປໂລກ່າວເຖິງວິທີທີ່ພຣະເຈົ້າໄດ້ “ເປີດປະຕູ” ສຳລັບການປະກາດຂ່າວປະເສີດຢູ່ທີ່ເມືອງໂທອາດ, ເພິ່ນໄດ້ເຮັດສຳເລັດໃນເວລາສັ້ນໆ: “ແຕ່ວ່າເປັນຍ້ອນພຣະຄຸນຂອງພຣະເຈົ້າ” ຜູ້ຊົງນຳພວກເຮົາໃຫ້ຊະເລີຍໃນຂະບວນແຫ່ງໄຊຊະນະຂອງພຣະຄຣິດ ແລະ ຊົງໃຊ້ພວກເຮົາເພື່ອເຜີຍແຜ່ຄວາມຮູ້ເລື່ອງພຣະອົງໄປທົ່ວທຸກຫົນແຫ່ງ” (2 ກຣທ 2:14).

ຄວາມຮູ້ເລື່ອງພຣະຄຣິດປຽບເໝືອນກິ່ນຫອມທີ່ແຜ່ໄປທົ່ວທຸກຫົນແຫ່ງ, ເຂົ້າເຖິງທຸກຈິດວິນຍານ ສຳລັບຊາວໂກຣິນໂທເຊັ່ນດຽວກັບພວກເຮົາ, ກິ່ນຫອມນີ້ແມ່ຊີວິດອັນນິຣັນ ແຕ່ສຳລັບຜູ້ທີ່ປະຕິເສດການຊົງຮຽກເອີ້ນມັນຄືກິ່ນແຫ່ງຄວາມຕາຍ. (2 ກຣທ 2:15-16).





ອຈ ໂປໂລ ເນັ້ນຢ້ຳເຖິງຄວາມຮັບຜິດຊອບທີ່ມາພ້ອມກັບການປະກາດຂ່າວປະເສີດ, ໂດຍອະທິບາຍວ່າ ຕ້ອງປະກາດດ້ວຍຄວາມຈິງໃຈ ໂດຍບໍ່ສະແຫວງຫາຜົນປະໂຫຍດສ່ວນໂຕ ແຕ່ເພື່ອຄວາມລອດຂອງຜູ້ຟັງ. (2 ກຣທ 2:17).

“ຜູ້ສົ່ງຂ່າວທີ່ສັດຊື່ຜູ້ ນີ້ໄດ້ນຳຂ່າວທີ່ໜ້າຊື່ນຊົມມາວ່າ ການປ່ຽນແປງຢ່າງອັດສະຈັນໄດ້ເກີດຂຶ້ນໃນໝູ່ຜູ້ເຊື່ອໃນເມືອງໂກຣິນໂທ. ຫຼາຍຄົນໄດ້ຮັບເອົາຄຳສອນທີ່ຢູ່ໃນຈົດໝາຍຂອງ ອຈ ໂປໂລ ແລະ ໄດ້ກັບໃຈຈາກບາບຂອງພວກເຂົາ. ຊີວິດຂອງພວກເຂົາບໍ່ໄດ້ເປັນທີ່ເສື່ອມເສຍຕໍ່ພຣິດສະຕະຢານາຈັກອີກຕໍ່ໄປ, ແຕ່ໄດ້ສົ່ງອິດທິພົນທີ່ທົງພະລັງໃນການສົ່ງເສີມຄວາມຢຳເກງພຣະເຈົ້າໃນທາງປະຕິບັດ. [...]

ການກັບໃຈທີ່ເກີດຈາກອິດທິພົນຂອງພຣະຄຸນຂອງພຣະເຈົ້າເທິງຈິດໃຈຈະນຳໄປສູ່ການສາລະພາບ ແລະ ການລະຖິ້ມບາບ. ສິ່ງເຫຼົ່ານີ້ຄືຜົນລະໄມ້ທີ່ອັກຄະສາວົກໄດ້ປະກາດວ່າໄດ້ເຫັນໃນຊີວິດຂອງຜູ້ເຊື່ອໃນເມືອງໂກຣິນໂທ.”

**EGW (The Acts of the Apostles, pp. 324)**